ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ......87....../ຖວທ
ນະຄອນຫຼວງວຽງຈັນ, ວັນທີ 31 ມັງກອນ 2024

# ຂໍ້ຕົກລົງ
## ວ່າດ້ວຍ ທຸລະກິດບໍລິການສົ່ງເສີມສຸຂະພາບ

- ອີງຕາມ ກົດໝາຍ ວ່າດ້ວຍການທ່ອງທ່ຽວ ສະບັບປັບປຸງ ເລກທີ 32/ສພຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 678/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມຄຸ້ມຄອງທຸລະກິດການທ່ອງທ່ຽວ ສະບັບເລກທີ 1085/ຄທທ, ລົງວັນທີ 05 ທັນວາ 2023.

## ລັດຖະມົນຕີ ອອກຂໍ້ຕົກລົງ:
## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານທຸລະກິດບໍລິການສົ່ງເສີມສຸຂະພາບ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄຸນນະພາບ, ປອດໄພ, ໄດ້ມາດຕະຖານ ແລະ ເປັນເອກະພາບກັນໃນທົ່ວປະເທດ ແນໃສ່ການພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງ ອຸດສາຫະກຳການທ່ອງທ່ຽວ ຢ່າງມີຈຸດສຸມ, ມີປະສິດທິພາບ, ປະສິດທິຜົນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

### ມາດຕາ 2 ທຸລະກິດບໍລິການສົ່ງເສີມສຸຂະພາບ

ທຸລະກິດບໍລິການສົ່ງເສີມສຸຂະພາບ ແມ່ນການດຳເນີນທຸລະກິດໃຫ້ບໍລິການກ່ຽວກັບ ການນວດ, ການສະປາ ແລະ ການຣົມຢາພື້ນເມືອງ ເພື່ອຈຸດປະສົງໃນການຜ່ອນຄາຍ ແລະ ບັນເທົາອາການປວດເມື່ອຍຂອງຮ່າງກາຍ ແລະ ຈິດໃຈ ທີ່ບໍ່ກວມເຖິງການປິ່ນປົວ ເຊິ່ງອາດດຳເນີນຂຶ້ນຢູ່ໃນສະຖານທີ່ພັກແຮມ ຫຼື ສະຖານທີ່ສະເພາະ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ການບຳບັດດ້ວຍພະລັງງານ** ໝາຍເຖິງ ກິດຈະກຳໜຶ່ງຂອງການສະປາ ດ້ວຍການນຳໃຊ້ພະລັງງານຄວາມຮ້ອນ, ຄວາມເຢັນ, ແສງ ຫຼື ອື່ນໆ ເພື່ອການຜ່ອນຄາຍຮ່າງກາຍ ແລະ ຈິດໃຈ;
2. **ໂພຊະນາການ** ໝາຍເຖິງ ຂະບວນການ ໃນການຜະລິດ, ການແຈກຢາຍ, ການປຸງແຕ່ງ ທີ່ໄດ້ມາດຕະຖານ ແລະ ການບໍລິໂພກອາຫານ ທີ່ປອດໄພ, ມີປະໂຫຍດ, ຫຼາກຫຼາຍ ແລະ ຄົບໝວດ;
3. **ຢາພື້ນເມືອງ** ໝາຍເຖິງ ຜະລິດຕະພັນຢາທີ່ໄດ້ມາຈາກພືດ, ຕົ້ນໄມ້, ສັດ, ແຮ່ທາດ ຫຼື/ແລະ ພາກສ່ວນໃດໜຶ່ງຂອງພືດ, ຕົ້ນໄມ້ ແລະ ສັດ ທີ່ເປັນຢາ ເຊິ່ງໄດ້ນຳມາປຸງແຕ່ງ, ຫຸ້ມຫໍ່ ແລະ ຕິດສະຫຼາກ. ໃນນັ້ນ, ລັກສະນະ ແລະ ຄວາມແຮງຂອງການອອກລິດນັ້ນ ໄດ້ຮັບການພິສູດແລ້ວ ຫຼື ຍັງບໍ່ທັນໄດ້ຮັບການພິສູດດ້ວຍວິທະຍາສາດປັດຈຸບັນ, ແຕ່ຕ້ອງຖືກຮັບຮູ້ຈາກກະຊວງສາທາລະນະສຸກ;
4. **ການປິ່ນປົວ** ໝາຍເຖິງ ການບໍລິການຄົນເຈັບດ້ວຍສະຕິ ແລະ ຄວາມຮັບຜິດຊອບ ເພື່ອກວດ, ຊອກຄົ້ນຫາພະຍາດ, ບົ່ງມະຕິພະຍາດ, ວາງຢາ, ປະຕິບັດເຕັກນິກການແພດ, ເຮັດໃຫ້ຄົນເຈັບໄດ້ຮັບການພັກຜ່ອນ, ຟື້ນຟູສຸຂະພາບ, ຫາຍຈາກພະຍາດ ແລະ ມີສຸຂະພາບດີ, ແຂງແຮງ ລວມທັງການສົ່ງເສີມສຸຂະພາບ, ການກັນພະຍາດ ຂອງພົນລະເມືອງ;
5. **ຜະລິດຕະພັນເສີມສຸຂະພາບ** ໝາຍເຖິງ ຜະລິດຕະພັນທີ່ໄດ້ມາຈາກພືດ, ຕົ້ນໄມ້, ແຮ່ທາດ, ສັດ ແລະ ວິຕາມິນຕ່າງໆ ທີ່ໄດ້ຜ່ານການປຸງແຕ່ງ, ການຫຸ້ມຫໍ່ ແລະ ຕິດສະຫຼາກ ຕົ້ນຕໍ ແມ່ນເພື່ອນຳໃຊ້ເຂົ້າໃນການເສີມສ້າງບາງຈຸລັງໃນຮ່າງກາຍ ແຕ່ຫາກບໍ່ແມ່ນນຳໃຊ້ ເພື່ອກັນພະຍາດ ແລະ ປິ່ນປົວ;
6. **ຜະລິດຕະພັນເຄື່ອງສຳອາງ** ໝາຍເຖິງ ສານ ຫຼື ການປຸງແຕ່ງໃດໜຶ່ງ ທີ່ໃຊ້ ທາ, ນວດ, ຂັດ, ສີດພົ່ນໃສ່ພາກສ່ວນໃດໜຶ່ງຂອງຮ່າງກາຍ (ຜິວໜັງ, ລະບົບຜົມ, ແຂ້ວ, ເລັບ, ສົບ, ປາກ) ເພື່ອທຳຄວາມສະອາດ, ເຮັດໃຫ້ມີກິ່ນຫອມ ແລະ ສວຍງາມ;
7. **ສະຖານທີ່ພັກແຮມ** ໝາຍເຖິງ ສະຖານທີ່ພັກຊົ່ວຄາວຂອງນັກທ່ອງທ່ຽວ, ນັກເດີນທາງ ແລະ ບຸກຄົນທົ່ວໄປ ທີ່ມີຈຸດປະສົງເພື່ອພັກຜ່ອນ ມີໂຄງສ້າງເປັນຕຶກ ຫຼື ອາຄານ ທີ່ມີລະດັບແຕກຕ່າງກັນ;
8. **ສະຖານທີ່ສະເພາະ** ໝາຍເຖິງ ສະຖານທີ່ອື່ນ ທີ່ບໍ່ແມ່ນສະຖານທີ່ພັກແຮມ;
9. **ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ** ໝາຍເຖິງ ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ; ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ; ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 4 ຫຼັກການກ່ຽວກັບວຽກງານທຸລະກິດບໍລິການສົ່ງເສີມສຸຂະພາບ**

ທຸລະກິດບໍລິການສົ່ງເສີມສຸຂະພາບ ຕ້ອງປະຕິບັດຕາມຫຼັກການດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ແຜນພັດທະນາການທ່ອງທ່ຽວ ຂອງ ສປປ ລາວ;

2. ຮັບປະກັນຄວາມ ສະຫງົບ, ເປັນລະບຽບຮຽບຮ້ອຍ, ຍືນຍົງ, ສະດວກ, ວ່ອງໄວ, ສະເໝີພາບ ແລະ ຍຸຕິທຳ;

3. ຮັບປະກັນຄວາມປອດໄພດ້ານການບໍລິການ, ຜະລິດຕະພັນທີ່ນຳໃຊ້, ສຸຂະພາບ ແລະ ຊັບສິນ ຂອງຜູ້ຊົມໃຊ້;

4. ຮັບປະກັນການປະສານສົມທົບ ແລະ ຮ່ວມມືກັບຂະແໜງການ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ;

5. ຮັບປະກັນການປົກປັກຮັກສາສິ່ງແວດລ້ອມ ແລະ ວັດທະນະທຳອັນດີງາມຂອງຊາດ.

### ມາດຕາ 5 ຂອບເຂດການນຳໃຊ້ຂໍ້ຕົກລົງ

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບທຸລະກິດບໍລິການສິ່ງເສີມສຸຂະພາບ ຢູ່ ສປປ ລາວ ເຊິ່ງບໍ່ກວມເຖິງບຸກຄົນທີ່ໃຫ້ບໍລິການນວດນອກສະຖານທີ່, ການນວດບຳບັດໃນໂຮງໝໍ ຫຼື ຄຣີນິກທາງການແພດ.

## ໝວດທີ 2

## ປະເພດ ແລະ ກິດຈະກຳ ຂອງທຸລະກິດບໍລິການສິ່ງເສີມສຸຂະພາບ

### ມາດຕາ 6 ປະເພດຂອງທຸລະກິດບໍລິການສິ່ງເສີມສຸຂະພາບ

ທຸລະກິດບໍລິການສິ່ງເສີມສຸຂະພາບ ປະກອບດ້ວຍ ສາມ ປະເພດ ດັ່ງນີ້:

1. ການນວດ;
2. ການສະປາ;
3. ການຮົມຢາພື້ນເມືອງ.

### ມາດຕາ 7 ການນວດ

ການນວດ ຫຼື ການນວດແຜນບູຮານ ແມ່ນການກົດ, ປະຄົບ, ບີບ, ຈັບເສັ້ນ ເຊິ່ງອາດລວມເຖິງການນຳໃຊ້ເຕັກໂນຊີທີ່ທັນສະໄໝ ຫຼື ສິ່ງອື່ນ ເພື່ອຈຸດປະສົງໃນການສ້າງຄວາມຜ່ອນຄາຍ ແລະ ເບົາເທົາອາການປວດເມື່ອຍຂອງຮ່າງກາຍ.

### ມາດຕາ 8 ການສະປາ

ການສະປາ ແມ່ນການບຳບັດດ້ວຍນ້ຳ, ຂັດຜິວ, ທໍ່ຕົວ, ອົບອາຍນ້ຳ, ອົບແຫ້ງ, ອອກກຳລັງກາຍ, ຫຼຸດນ້ຳໜັກດ້ວຍອາຫານ, ຫຼິ້ນໂຍຄະ, ນັ່ງສະມາທິ, ບຳບັດດ້ວຍວິທີທາງໂພຊະນາການ, ບຳບັດດ້ວຍພະລັງງານ, ບຳບັດດ້ວຍສະໝຸນໄພ, ແຊ່ບໍ່ນ້ຳອຸ່ນ, ອາບແດດ ເຊິ່ງອາດລວມເຖິງການນຳໃຊ້ເຕັກໂນຊີທີ່ທັນສະໄໝ ຫຼື ສິ່ງອື່ນເພື່ອຈຸດປະສົງໃນການສ້າງຄວາມຜ່ອນຄາຍ, ເບົາເທົາອາການປວດເມື່ອຍ, ການບຳລຸງຜິວ ຫຼື ຮ່າງກາຍ ໃນນັ້ນ, ອາດລວມເຖິງກິດຈະກຳການໃຫ້ບໍລິການປະເພດນວດແຜນບູຮານ.

ທຸລະກິດບໍລິການສົ່ງເສີມສຸຂະພາບ ປະເພດການສະປາ ຕ້ອງປະກອບດ້ວຍກິດຈະກໍາການບໍລິການຢ່າງໜ້ອຍ ສາມ ກິດຈະກໍາຂຶ້ນໄປຕາມທີ່ໄດ້ລະບຸໄວ້ ດັ່ງນີ້:

1. ການຂັດຜິວຮ່າງກາຍ ຫຼື ຜິວໃບໜ້າ;
2. ການເຮັດຄວາມສະອາດຮ່າງກາຍ ຫຼື ໃບໜ້າ;
3. ການນັ່ງສະມາທິ;
4. ການນວດຮ່າງກາຍ ຫຼື ໃບໜ້າ;
5. ການບໍລິການອາຫານ ຫຼື ເຄື່ອງດື່ມເພື່ອສຸຂະພາບ;
6. ການບໍາລຸງຜິວຮ່າງກາຍ ຫຼື ໃບໜ້າ;
7. ການປະຄົບເຢັນ ຫຼື ປະຄົບຫີນຮ້ອນ;
8. ການຟອກຜິວ;
9. ການອົບແຫ້ງ (ຊາວນ້າ);
10. ການອົບອາຍນໍ້າ;
11. ການອາບຊາຍຮ້ອນ ຫຼື ການອາບນໍ້ານົມ;
12. ການຫຼິ້ນໂຍຄະ ຫຼື ແອໂຣບິກ;
13. ກິດຈະກໍາສະປາອື່ນໆ.

**ມາດຕາ 9 ການຮົມຢາພື້ນເມືອງ**

ການຮົມຢາພື້ນເມືອງ ແມ່ນການຮົມ, ການອົບ ດ້ວຍການນໍາໃຊ້ຜະລິດຕະພັນທີ່ໄດ້ມາຈາກພືດ, ຕົ້ນໄມ້, ແຮ່ທາດ ຫຼື/ແລະ ພາກສ່ວນໃດໜຶ່ງຂອງພືດ, ຕົ້ນໄມ້ ທີ່ເປັນຢາສະໝຸນໄພ, ຮາກໄມ້, ເປືອກໄມ້ ແລະ ອື່ນໆ ແບບສົດ ຫຼື ແຫ້ງ ຫຼາຍຊະນິດຕົ້ມໃຫ້ເກີດເປັນອາຍນໍ້າເຂົ້າສູ່ຫ້ອງອົບ ເພື່ອບໍາບັດ, ກະຕຸ້ນລະບົບການໄຫຼວຽນຂອງເລືອດ, ທາງເດີນຫາຍໃຈ ຫຼື ບັນເທົາອາການປວດເມື່ອຍຂອງຮ່າງກາຍ.

## ໝວດທີ 3
## ມາດຕະຖານ ແລະ ຜະລິດຕະພັນ ຂອງທຸລະກິດບໍລິການສົ່ງເສີມສຸຂະພາບ

**ມາດຕາ 10 ມາດຕະຖານການບໍລິການສົ່ງເສີມສຸຂະພາບ**

ມາດຕະຖານການບໍລິການສົ່ງເສີມສຸຂະພາບ ແມ່ນການກໍານົດຄຸນລັກສະນະຂອງຜະລິດຕະພັນ, ສິນຄ້າ, ການບໍລິການ, ຂະບວນການ, ກໍາມະວິທີ, ສິ່ງແວດລ້ອມ ແລະ ບັນຫາອື່ນ ທີ່ຕິດພັນກັບມາດຕະຖານລວມ ແລະ ມາດຕະຖານສະເພາະ ຂອງການບໍລິການສົ່ງເສີມສຸຂະພາບ ເພື່ອຕີລາຄາ ແລະ ຈັດລະດັບຄຸນນະພາບ.

ການບໍລິການສົ່ງເສີມສຸຂະພາບ ແຕ່ລະປະເພດແມ່ນມີການກໍານົດມາດຕະຖານລວມ ແລະ ມາດຕະຖານສະເພາະ ຂອງການບໍລິການສົ່ງເສີມສຸຂະພາບ ເຊິ່ງຈະໄດ້ກໍານົດຕ່າງຫາກໃນປຶ້ມຄູ່ມືມາດຕະຖານ.

**ມາດຕາ 11 ການປະເມີນມາດຕະຖານ**

ທຸລະກິດບໍລິການສິ່ງເສີມສຸຂະພາບ ຈະໄດ້ຮັບການປະເມີນມາດຕະຖານການບໍລິການໂດຍຄະນະກໍາມະການ ປະເມີນມາດຕະຖານ ຕາມຂໍ້ຕົກລົງສະບັບນີ້ ແລະ ຈະຖືກປະເມີນຄືນທຸກ ສອງ ປີ ນັບຈາກມື້ໄດ້ຮັບການຢັ້ງຢືນ ລະດັບມາດຕະຖານຄັ້ງຫຼ້າສຸດເປັນຕົ້ນໄປ.

ຄະນະກໍາມະການປະເມີນມາດຕະຖານການບໍລິການສິ່ງເສີມສຸຂະພາບ ຕ້ອງປະກອບມີຕົວແທນຈາກ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ ເຊິ່ງຈະກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 12 ມາດຕະຖານລວມຂອງພະນັກງານຜູ້ໃຫ້ບໍລິການ**

ພະນັກງານຜູ້ໃຫ້ບໍລິການສິ່ງເສີມສຸຂະພາບ ຕ້ອງມີມາດຕະຖານ ແລະ ຄຸນນະສົມບັດ ດັ່ງນີ້:

1. ໄດ້ຮັບການຝຶກອົບຮົມ ດ້ານວິຊາສະເພາະຢ່າງຖືກຕ້ອງ ທີ່ສາມາດຢັ້ງຢືນໄດ້;
2. ມີຄວາມຮູ້ດ້ານວິຊາຊີບ ແລະ ຜະລິດຕະພັນທີ່ນໍາໃຊ້ໃນລະດັບທີ່ແນ່ນອນ;
3. ມີຄຸນສົມບັດດີ, ມີມະນຸດສໍາພັນດີ, ມີມາລະຍາດດີ ແລະ ມີຈັນຍາບັນ;
4. ມີສຸຂະພາບດີ ແລະ ບໍ່ເປັນພະຍາດຕິດແປດ;
5. ການແຕ່ງກາຍສຸພາບ ແລະ ຮຽບຮ້ອຍ ຫຼື ໃສ່ຊຸດປະຈໍາຂອງຮ້ານ;

**ມາດຕາ 13 ການນໍາໃຊ້ຜະລິດຕະພັນ**

ທຸລະກິດບໍລິການສິ່ງເສີມສຸຂະພາບ ທຸກປະເພດ ຕ້ອງນໍາໃຊ້ຜະລິດຕະພັນທີ່ໄດ້ມາດຕະຖານ, ຮັບປະກັນ ຄຸນນະພາບ, ປະສິດທະພາບ ແລະ ຄວາມປອດໄພຕໍ່ຜູ້ໃຊ້ບໍລິການ.

ທຸລະກິດບໍລິການສິ່ງເສີມສຸຂະພາບ ທີ່ມີການນໍາໃຊ້ ຫຼື ຈໍາໜ່າຍ ຜະລິດຕະພັນເສີມສຸຂະພາບ, ຜະລິດຕະພັນ ເຄື່ອງສໍາອາງ ຫຼື ຢາ ຈະຕ້ອງໄດ້ຮັບການກວດກາ ແລະ ປະຕິບັດຕາມລະບຽບການທີ່ຂະແໜງສາທາລະນະສຸກ ກໍານົດໄວ້ຢ່າງເຂັ້ມງວດ.

## ໝວດທີ 4
## ການດໍາເນີນທຸລະກິດບໍລິການສິ່ງເສີມສຸຂະພາບ

**ມາດຕາ 14 ຮູບການດໍາເນີນທຸລະກິດບໍລິການສິ່ງເສີມສຸຂະພາບ**

ການດໍາເນີນທຸລະກິດບໍລິການສິ່ງເສີມສຸຂະພາບ ປະກອບມີ ສອງ ຮູບການຄື:

1. ການດໍາເນີນທຸລະກິດ ໃນສະຖານທີ່ພັກແຮມ;
2. ການດໍາເນີນທຸລະກິດ ໃນສະຖານທີ່ສະເພາະ.

**ມາດຕາ 15 ການດໍາເນີນທຸລະກິດ ພາຍໃນສະຖານທີ່ພັກແຮມ**

ການດໍາເນີນທຸລະກິດ ພາຍໃນສະຖານທີ່ພັກແຮມ ແມ່ນກິດຈະການທີ່ດໍາເນີນພາຍໃນສະຖານທີ່ຂອງ ໂຮງແຮມ, ຣີສອດ, ເຮືອນພັກ ຫຼື ປະເພດອື່ນ ຕາມ ຂໍ້ຕົກລົງວ່າດ້ວຍສະຖານທີ່ພັກແຮມ ເຊິ່ງອາດເປັນ

ການດໍາເນີນ ໂດຍສະຖານທີ່ພັກແຮມເອງ ຫຼື ດ້ວຍການເຊົ່າສະຖານທີ່ຈາກບຸກຄົນ ຫຼື ນິຕິບຸກຄົນພາຍນອກ ເພື່ອດໍາເນີນ ທຸລະກິດບໍລິການສົ່ງເສີມສຸຂະພາບ.

**ມາດຕາ 16 ການດໍາເນີນທຸລະກິດ ພາຍໃນສະຖານທີ່ສະເພາະ**

ການດໍາເນີນທຸລະກິດ ພາຍໃນສະຖານທີ່ສະເພາະ ແມ່ນກິດຈະການທີ່ດໍາເນີນຢູ່ນອກສະຖານທີ່ຂອງ ໂຮງແຮມ, ຣີສອດ, ເຮືອນພັກ ຫຼື ປະເພດອື່ນ ຕາມ ຂໍ້ຕົກລົງວ່າດ້ວຍສະຖານທີ່ພັກແຮມ ເຊິ່ງມີຕຶກອາຄານ ຫຼື ພື້ນທີ່ສະເພາະເປັນຂອງ ບຸກຄົນ ຫຼື ນິຕິບຸກຄົນເອງ ເພື່ອດໍາເນີນທຸລະກິດບໍລິການສົ່ງເສີມສຸຂະພາບ ເຊິ່ງຕ້ອງໄດ້ ຂໍອະນຸຍາດດໍາເນີນທຸລະກິດ ຕາມທີ່ກໍານົດໄວ້ໃນ ມາດຕາ 17, 29, 20 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 5
## ຂັ້ນຕອນການຂໍອະນຸຍາດດໍາເນີນທຸລະກິດ

**ມາດຕາ 17 ການສະເໜີຂໍອະນຸຍາດດໍາເນີນທຸລະກິດ**

ນິຕິບຸກຄົນ ທີ່ມີຈຸດປະສົງຂໍດໍາເນີນທຸລະກິດບໍລິການສົ່ງເສີມສຸຂະພາບ ຕ້ອງຂໍອະນຸຍາດດໍາເນີນທຸລະກິດ ນໍາຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ທີ່ກ່ຽວຂ້ອງ ໂດຍປະຕິບັດເງື່ອນໄຂຕາມ ມາດຕາ 19 ແລະ ໃຫ້ປະກອບເອກະສານຕາມ ມາດຕາ 20 ຂອງຂໍ້ຕົກລົງສະບັບນີ້ ເຊິ່ງສາມາດຍື່ນຄໍາຮ້ອງ ແລະ ເອກະສານ ປະກອບ ໂດຍກົງ ຫຼື ຜ່ານທາງເອເລັກໂຕຣນິກ.

ເມື່ອຂະແໜງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ທີ່ກ່ຽວຂ້ອງ ໄດ້ຮັບຄໍາຮ້ອງຢ່າງຖືກຕ້ອງ ຄົບຖ້ວນແລ້ວ ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ ພາຍໃນ ສາມ ວັນລັດຖະການ ນັບແຕ່ມື້ໄດ້ຮັບຄໍາຮ້ອງເປັນຕົ້ນໄປ ເພື່ອຄົ້ນຄວ້າພິຈາລະນາ.

ສະຖານທີ່ພັກແຮມ ທີ່ດໍາເນີນກິດຈະການສົ່ງເສີມສຸຂະພາບເອງ ສາມາດນໍາໃຊ້ໃບອະນຸຍາດໃບດຽວ ກັບໃບອະນຸຍາດຂອງສະຖານທີ່ພັກແຮມ ໂດຍບໍ່ຕ້ອງຂໍອະນຸຍາດດໍາເນີນທຸລະກິດເພີ່ມຕື່ມ. ແຕ່ເຈົ້າຂອງ ກິດຈະການສະຖານທີ່ພັກແຮມຕ້ອງແຈ້ງກິດຈະການດັ່ງກ່າວໃນເວລາຂໍອະນຸຍາດດໍາເນີນທຸລະກິດສະຖານທີ່ ພັກແຮມ.

ໃນກໍລະນີ ສະຖານທີ່ພັກແຮມ ຫາກຕ້ອງການດໍາເນີນກິດຈະການດັ່ງກ່າວ ຢູ່ ພາຍນອກພື້ນທີ່ຂອງ ສະຖານທີ່ພັກແຮມ ຕ້ອງໄດ້ຂໍອະນຸຍາດດໍາເນີນທຸລະກິດຕ່າງຫາກ.

ນິຕິບຸກຄົນພາຍນອກ ທີ່ມີການເຊົ່າພື້ນທີ່ຂອງສະຖານທີ່ພັກແຮມ ເພື່ອດໍາເນີນ ກິດຈະການດັ່ງກ່າວ ຕ້ອງໄດ້ຂໍອະນຸຍາດດໍາເນີນທຸລະກິດຕ່າງຫາກ.

ການດໍາເນີນທຸລະກິດ ໃນເຂດເສດຖະກິດພິເສດໃຫ້ປະຕິບັດຕາມກົດໝາຍວ່າດ້ວຍເຂດເສດຖະກິດ ພິເສດ ໂດຍສອດຄ່ອງກັບມາດຕະຖານຂອງແຕ່ລະປະເພດ ແລະ ເງື່ອນໄຂການຮ້ອງຂໍດໍາເນີນທຸລະກິດ ຕາມທີ່ ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້.

ການຂໍອະນຸຍາດດໍາເນີນທຸລະກິດການທ່ອງທ່ຽວທາງເອເລັກໂຕຣນິກໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 18 ການພິຈາລະນາ ອອກໃບອະນຸຍາດດຳເນີນທຸລະກິດ**

ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດການທ່ອງທ່ຽວ ພາຍໃນ ເຈັດ ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ ໂດຍປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ໃນກໍລະນີບໍ່ສາມາດ ອອກໃບອະນຸຍາດດຳເນີນທຸລະກິດໄດ້ ຕ້ອງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍພາຍໃນກຳນົດເວລາດັ່ງກ່າວ.

**ມາດຕາ 19 ເງື່ອນໄຂຂອງການຂໍໃບອະນຸຍາດດຳເນີນທຸລະກິດ**

ນິຕິບຸກຄົນ ທີ່ຕ້ອງການຂໍໃບອະນຸຍາດດຳເນີນທຸລະກິດດັ່ງກ່າວ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຖານະເປັນນິຕິບຸກຄົນ ຕາມກົດໝາຍ;
2. ມີທຶນຈົດທະບຽນຢ່າງຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 25 ຂອງຂໍ້ຕົກລົງສະບັບນີ້;
3. ປະກອບເອກະສານຄົບຖ້ວນ ຕາມທີ່ກຳນົດໄວ້ໃນ ມາດຕາ 20 ຂອງຂໍ້ຕົກລົງສະບັບນີ້;
4. ມີທີ່ຕັ້ງສຳນັກງານ.

**ມາດຕາ 20 ການປະກອບເອກະສານ ແລະ ຄຳຮ້ອງ**

**ກ. ເອກະສານ ຄຳຮ້ອງ ສະເໜີຂໍໃບອະນຸຍາດດຳເນີນທຸລະກິດ ມີດັ່ງນີ້:**

1. ຄຳຮ້ອງຂໍດຳເນີນທຸລະກິດ ຕາມແບບພິມ ທີ່ ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກຳນົດ ໜຶ່ງ ໃບ;
2. ສຳເນົາ ໃບທະບຽນວິສາຫະກິດ ແລະ ຊຸດຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ;
3. ຮູບຖ່າຍເຈົ້າຂອງວິສາຫະກິດ ຂະໜາດ 3X4 ຊມ ພື້ນສີຂາວ ຈຳນວນ ສອງ ໃບ.

**ຂ. ເອກະສານ ຄຳຮ້ອງ ສະເໜີສືບຕໍ່ດຳເນີນທຸລະກິດ ມີ ດັ່ງນີ້:**

1. ຄຳຮ້ອງ ສະເໜີສືບຕໍ່ດຳເນີນທຸລະກິດ ໜຶ່ງ ໃບ;
2. ໃບເສຍອາກອນ ຫຼື ໃບຢັ້ງຢືນເສຍອາກອນ ປະຈຳປີຫຼ້າສຸດ;
3. ສຳເນົາ ໃບອະນຸຍາດດຳເນີນທຸລະກິດ ໜຶ່ງ ໃບ.

**ມາດຕາ 21 ໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດ ສາມາດນຳໃຊ້ໄດ້ຕະຫຼອດໄປ ແຕ່ຕ້ອງແຈ້ງເຈດຈຳນົງຂໍສືບຕໍ່ດຳເນີນທຸລະກິດ ກັບຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ກ່ຽວຂ້ອງ ໃນແຕ່ລະປີ.

ໃບອະນຸຍາດດຳເນີນທຸລະກິດ ບໍ່ສາມາດ ໂອນ ຫຼື ມອບໃຫ້ບຸກຄົນອື່ນນຳໃຊ້ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ໃບອະນຸຍາດດຳເນີນທຸລະກິດ ຈະຖືກຖອນ ໃນກໍລະນີຜູ້ດຳເນີນທຸລະກິດ ບໍ່ປະຕິບັດຕາມຄຳສັ່ງໂຈະ. ພາຍຫຼັງໄດ້ຖອນໃບອະນຸຍາດດຳເນີນທຸລະກິດແລ້ວ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ກ່ຽວຂ້ອງ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ທີ່ກ່ຽວຂ້ອງ ພາຍໃນເວລາ ຫ້າ ວັນລັດຖະການ ນັບແຕ່ວັນຖອນໃບອະນຸຍາດດຳເນີນທຸລະກິດ ເປັນຕົ້ນໄປ.

**ມາດຕາ 22 ການຢັ້ງຢືນການສືບຕໍ່ດຳເນີນທຸລະກິດ**

ຫົວໜ່ວຍທຸລະກິດ ຕ້ອງໄດ້ຖືກຢັ້ງຢືນການສືບຕໍ່ດຳເນີນທຸລະກິດ ໃນແຕ່ລະປີ ຫຼື ເມື່ອຄົບກຳນົດ ສິບສອງເດືອນ ນັບແຕ່ໄດ້ຮັບໃບອະນຸຍາດດຳເນີນທຸລະກິດ ໂດຍປະກອບເອກະສານ ແລະ ຍື່ນຄຳຮ້ອງສະເໜີ ຂໍສືບຕໍ່ດຳເນີນທຸລະກິດ ຕາມມາດຕາ 17, 20 ຂໍ້ ຂ ແລະ 23 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 23 ບ່ອນຍື່ນຄຳຮ້ອງ ສະເໜີສືບຕໍ່ດຳເນີນທຸລະກິດ**

ຫົວໜ່ວຍທຸລະກິດ ທີ່ມີຈຸດປະສົງຍື່ນຄຳຮ້ອງສະເໜີສືບຕໍ່ດຳເນີນທຸລະກິດຂອງຕົນ ໃຫ້ປະຕິບັດຕາມ ມາດຕາ 17 ຂອງຂໍ້ຕົກລົງສະບັບນີ້ ເພື່ອຢັ້ງຢືນການສືບຕໍ່ດຳເນີນທຸລະກິດຂອງຕົນ.

## ໝວດທີ 6
## ການກຳນົດທຶນ ແລະ ທຶນຈົດທະບຽນ

**ມາດຕາ 24 ການກຳນົດທຶນຈົດທະບຽນ**

ການກຳນົດທຶນຈົດທະບຽນ ແມ່ນເພື່ອກຳນົດຕົວຊີ້ບອກການຈັດລະດັບມາດຕະຖານຂອງທຸລະກິດບໍລິການ ສິ່ງເສີມສຸຂະພາບ ແລະ ການແບ່ງຂັ້ນຄຸ້ມຄອງຂອງຂະແໜງຖະແຫຼງຂ່າວ, ວັດທະນະທາ ແລະ ທ່ອງທ່ຽວ.

ທຶນຈົດທະບຽນ ຕ້ອງມີຈິງໂດຍການຢັ້ງຢືນຂອງທະນາຄານ ຢູ່ ສປປ ລາວ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 25 ທຶນຈົດທະບຽນຂອງຫົວໜ່ວຍທຸລະກິດບໍລິການສິ່ງເສີມສຸຂະພາບ**

ຫົວໜ່ວຍທຸລະກິດບໍລິການສິ່ງເສີມສຸຂະພາບ ແຕ່ລະປະເພດ ຕ້ອງປະກອບທຶນຈົດທະບຽນຂັ້ນຕໍ່າສຸດ ດັ່ງນີ້:

1. ທຸລະກິດບໍລິການສິ່ງເສີມສຸຂະພາບ ປະເພດການນວດ ແລະ ຮົມຢາພື້ນເມືອງ ຕ້ອງມີທຶນຈົດທະບຽນ ສອງຮ້ອຍ ລ້ານກີບຂຶ້ນໄປ;

2. ທຸລະກິດບໍລິການສິ່ງເສີມສຸຂະພາບ ປະເພດການສະປາ ຕ້ອງມີທຶນຈົດທະບຽນ ສາມຮ້ອຍ ລ້ານກີບ ຂຶ້ນໄປ ແລະ ຕ້ອງປະກອບມີກິດຈະກຳບໍລິການຢ່າງໜ້ອຍ ສາມ ກິດຈະກຳຂຶ້ນໄປຕາມທີ່ລະບຸໄວ້ໃນ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້;

## ໝວດທີ 7
## ການໂຈະ, ການຍົກເລີກ ແລະ ການສິ້ນສຸດການດຳເນີນທຸລະກິດ

### ມາດຕາ 26 ການໂຈະການດຳເນີນທຸລະກິດ

ການດຳເນີນທຸລະກິດການທ່ອງທ່ຽວ ຈະຖືກໂຈະໃນກໍລະນີ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດຳເນີນທຸລະກິດ;
2. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;
3. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ.

ໃນກໍລະນີຜູ້ດຳເນີນທຸລະກິດ ບໍ່ແກ້ໄຂ ແລະ ປັບປຸງ ຕາມການແຈ້ງເຕືອນແລ້ວ ໃຫ້ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ກ່ຽວຂ້ອງ ສັ່ງໂຈະການດຳເນີນທຸລະກິດ.

### ມາດຕາ 27 ຂັ້ນຕອນການໂຈະການດຳເນີນທຸລະກິດ

ການໂຈະຕາມການສະເໜີຂອງຜູ້ດຳເນີນທຸລະກິດ ຫຼື ຜູ້ຖືກຜົນກະທົບ ແມ່ນກົມກອງ, ພະແນກການ ຫ້ອງການ ທີ່ອະນຸຍາດດຳເນີນທຸລະກິດ ແລະ ອອກໃບທະບຽນວິສາຫະກິດ ຕ້ອງປະສານສົມທົບກັບເຈົ້າໜ້າທີ່ຕຳຫຼວດ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອກວດກາປະເມີນຜົນ ແລະ ພິສູດຫຼັກຖານ ກ່ອນການພິຈາລະນາອະນຸຍາດໃຫ້ໂຈະ ແລະ ແຈ້ງເຕືອນເປັນລາຍລັກອັກສອນ ໂດຍມີກຳນົດເວລາ ເພື່ອໃຫ້ຜູ້ດຳເນີນທຸລະກິດ ແກ້ໄຂ ຫຼື ປັບປຸງໃຫ້ຖືກຕ້ອງ.

ໃນກໍລະນີ ທີ່ບໍ່ສາມາດແກ້ໄຂໄດ້ຕາມກຳນົດເວລາທີ່ໄດ້ຕົກລົງກັນ, ການດຳເນີນທຸລະກິດດັ່ງກ່າວ ກໍຈະຖືກສັ່ງໂຈະ ພາຍໃນ ສາມ ວັນລັດຖະການ ນັບແຕ່ມື້ແຈ້ງເຕືອນເປັນລາຍລັກອັກສອນ ເປັນຕົ້ນໄປ.

ການໂຈະ ຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ ແມ່ນ ກົມ, ພະແນກການ, ຫ້ອງການ ທີ່ອະນຸຍາດດຳເນີນທຸລະກິດ ແລະ ອອກທະບຽນວິສາຫະກິດ ເປັນຜູ້ດຳເນີນການຕາມຂັ້ນຕອນ ແລະ ກຳນົດເວລາດຽວກັນກັບດັ່ງກ່າວຂ້າງເທິງນີ້.

ການໂຈະ ຕາມຄຳຕັດສິນຂອງສານ ແມ່ນ ກົມ, ພະແກນການ, ຫ້ອງການ ທີ່ອະນຸຍາດດຳເນີທຸລະກິດ ແລະ ອອກໃບທະບຽນວິສາຫະກິດ, ເຈົ້າໜ້າທີ່ຕຳຫຼວດ ແລະ ຂະແໜງການທີ່ກ່ຽວຂ້ອງ ປະສານສົມທົບກັນຈັດຕັ້ງປະຕິບັດຕາມຄຳຕັດສິນຂອງສານ.

### ມາດຕາ 28 ການຍົກເລີກການດຳເນີນທຸລະກິດ

ຫົວໜ່ວຍທຸລະກິດບໍລິການສົ່ງເສີມສຸຂະພາບ ຈະຖືກຍົກເລີກ ໃນກໍລະນີ ດັ່ງນີ້:

1. ຕາມການສະເໜີ ຂອງຜູ້ດຳເນີນທຸລະກິດ;
2. ບໍ່ເສຍພາສີ, ອາກອນ ແລະ ພັນທະການເງິນອື່ນຕາມກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້;
3. ຕາມຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ຍົກເລີກການດຳເນີນທຸລະກິດ;

4. ທຸລະກິດລົ້ມລະລາຍ ຕາມກົດໝາຍ.

ການຍົກເລີກການດຳເນີນທຸລະກິດ ຈະບໍ່ພາໃຫ້ຜູ້ດຳເນີນທຸລະກິດພົ້ນຈາກພັນທະ ແລະ ໜີ້ສິນທີ່ມີຕໍ່ບຸກຄົນ, ນິຕິບຸກຄົນ ແລະ ຕໍ່ພາກລັດ.

**ມາດຕາ 29 ຂັ້ນຕອນການຍົກເລີກການດຳເນີນທຸລະກິດ**

ການຍົກເລີກການດຳເນີນທຸລະກິດມີຂັ້ນຕອນ ມີດັ່ງນີ້:

1. ກົມ, ພະແນກການ, ຫ້ອງການ ທີ່ອະນຸຍາດດຳເນີນທຸລະກິດ ເປັນຜູ້ອອກໜັງສືແຈ້ງຍົກເລີກການດຳເນີນທຸລະກິດ ບົນພື້ນຖານການຕົກລົງເຫັນດີ ແລະ ການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;

2. ໃຫ້ປະຕິບັດພັນທະຕໍ່ລັດ ແລະ ໃຊ້ແທນໜີ້ສິນໃຫ້ແກ່ເຈົ້າໜີ້ ຢ່າງຄົບຖ້ວນ.

**ມາດຕາ 30 ການສິ້ນສຸດການດຳເນີນທຸລະກິດ**

ການດຳເນີນທຸລະກິດ ຈະສິ້ນສຸດ ໃນກໍລະນີ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດຳເນີນທຸລະກິດ;
2. ຖືກຖອນໃບອະນຸຍາດດຳເນີນທຸລະກິດຕາມກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້;
3. ຕາມຄຳຕັດສິນຂອງສານ.

## ໝວດທີ 8
## ສິດ ແລະ ພັນທະ

**ມາດຕາ 31 ສິດ ແລະ ພັນທະຂອງຫົວໜ່ວຍທຸລະກິດ**

ສິດ ແລະ ພັນທະຂອງຫົວໜ່ວຍທຸລະກິດບໍລິການສົ່ງເສີມສຸຂະພາບ ມີດັ່ງນີ້:

**ກ. ສິດ**

1. ດຳເນີນທຸລະກິດ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ເກັບຄ່າບໍລິການ, ໄດ້ຮັບຄ່າບໍລິການຈາກລູກຄ້າ ຖືກຕ້ອງຕາມຄວາມເປັນຈິງ;
3. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດທີ່ຖືກຕ້ອງ ໃນການດຳເນີນທຸລະກິດຂອງຕົນ;
4. ເປັນເຈົ້າກຳມະສິດຕໍ່ ຊັບສິນ, ສິ່ງກໍ່ສ້າງ ແລະ ວັດຖຸປະກອນ ຮັບໃຊ້ໃນກິດຈະການຂອງຕົນ;
5. ໄດ້ຮັບໝາກຜົນຈາກການດຳເນີນທຸລະກິດ, ໂອນ, ນຳໃຊ້, ຊື້ ຂາຍ ຊັບສິນຂອງຕົນ;
6. ຢຸດເຊົາການດຳເນີນທຸລະກິດບໍລິການສົ່ງເສີມສຸຂະພາບ ດ້ວຍຄວາມສະໝັກໃຈ;
7. ຮ້ອງຂໍຄວາມເປັນທຳຕໍ່ອົງການທີ່ກ່ຽວຂ້ອງ ເມື່ອເຫັນວ່າຕົນໄດ້ຮັບຄວາມເສຍປະໂຫຍດ;
8. ນຳໃຊ້ສິດອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ຂ. ພັນທະ**

1. ເຄົາລົບ, ປະຕິບັດຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;

2. ດຳເນີນທຸລະກິດ ຢ່າງຖືກຕ້ອງຕາມກົດໝາຍ, ລະບຽບການ ແລະ ມາດຕະຖານ ຂອງການບໍລິການສົ່ງເສີມສຸຂະພາບ;

3. ຮັບປະກັນຄວາມສະຫງົບ, ສະອາດ ແລະ ປອດໄພ, ປົກປັກຮັກສາສິ່ງແວດລ້ອມຢ່າງຮອບດ້ານກ່ຽວກັບການບໍລິການ;

4. ມີປະກັນໄພ, ຖືບັນຊີ, ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ຢ່າງຄົບຖ້ວນ, ຖືກຕ້ອງ ແລະ ທັນກຳນົດເວລາ;

5. ຈັດການຝຶກອົບຮົມວິຊາສະເພາະດ້ານການບໍລິການສົ່ງເສີມສຸຂະພາບ;

6. ແຕ່ງກາຍ, ນຸ່ງຖື ແລະ ເວົ້າຈາສຸພາບຮຽບຮ້ອຍ, ໃຫ້ກຽດ, ເຄົາລົບນັບຖື ໃຫ້ການຮ່ວມມື ແລະ ປະສານງານເປັນຢ່າງດີ ກັບການຈັດຕັ້ງ, ອົງການປົກຄອງທ້ອງຖິ່ນ, ບຸກຄົນ ທີ່ກ່ຽວຂ້ອງ ແລະ ຜູ້ໃຊ້ບໍລິການ;

7. ແຈ້ງເຈດຈຳນົງຂໍສືບຕໍ່ດຳເນີນທຸລະກິດ ຕາມກຳນົດເວລາ ທີ່ໄດ້ກຳນົດໄວ້ໃນລະບຽບການກ່ຽວຂ້ອງ;

8. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 32 ສິດ ແລະ ພັນທະຂອງຜູ້ໃຊ້ບໍລິການ**

ສິດ ແລະ ພັນທະຂອງຜູ້ໃຊ້ບໍລິການສົ່ງເສີມສຸຂະພາບ ມີດັ່ງນີ້:

**ກ. ສິດ**

1. ເລືອກຊົມໃຊ້ການບໍລິການຕາມຄວາມສະໝັກໃຈ;
2. ໄດ້ຮັບຄວາມສະດວກສະບາຍ ຈາກການບໍລິການຕາມລະດັບມາດຕະຖານການບໍລິການ;
3. ສອບຖາມ ຂໍ້ມູນ, ລາຍການ ແລະ ລາຄາ ບໍລິການ;
4. ຮ້ອງຂໍຄວາມເປັນທຳ ເມື່ອເຫັນວ່າຕົນຖືກ ສໍ້ໂກງ, ເອົາປຽບ ຫຼື ອົບປະໂຫຍດຈາກຜູ້ໃຫ້ບໍລິການ;
5. ແຈ້ງ ຫຼື ລາຍງານ ເຈົ້າໜ້າທີ່ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ເມື່ອພົບເຫັນປາກົດການຫຍໍ້ທໍ້ ຫຼື ເຫດການສຸກເສີນທີ່ເກີດຂຶ້ນ ໃນສະຖານທີ່ບໍລິການສົ່ງເສີມສຸຂະພາບ;
6. ນຳໃຊ້ສິດອື່ນຕາມກົດໝາຍ ແລະ ລະບຽບການກຳນົດ;

**ຂ. ພັນທະ**

1. ເຄົາລົບ ແລະ ປະຕິບັດ ກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;
2. ຈ່າຍຄ່າບໍລິການ ຢ່າງຖືກຕ້ອງຕາມຄວາມເປັນຈິງ;
3. ປະຕິບັດຕາມລະບຽບການຂອງການບໍລິການສົ່ງເສີມສຸຂະພາບ;
4. ໃຫ້ຄວາມຮ່ວມມືທີ່ດີຕໍ່ການຈັດຕັ້ງ, ເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງ;
5. ມີພຶດຕິກຳ ແລະ ເວົ້າຈາສຸພາບຮຽບຮ້ອຍ, ເຄົາລົບນັບຖື, ໃຫ້ກຽດຜູ້ໃຫ້ບໍລິການ, ພະນັກງານ, ເຈົ້າໜ້າທີ່, ການຈັດຕັ້ງ ແລະ ບຸກຄົນ ທີ່ກ່ຽວຂ້ອງກັບການບໍລິການ;
6. ຮັກສາຄວາມສະອາດ, ຄວາມປອດໄພ ແລະ ປົກປັກຮັກສາສິ່ງແວດລ້ອມ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 9
## ການຈັດຕັ້ງປະຕິບັດຄ່າທຳນຽມ ແລະ ຄ່າບໍລິການ

**ມາດຕາ 33 ການປະຕິບັດຄ່າທຳນຽມ ແລະ ຄ່າບໍລິການ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດບໍລິການສົ່ງເສີມສຸຂະພາບ ຢູ່ ສປປ ລາວ ຕ້ອງເສຍຄ່າທຳນຽມ ແລະ ຄ່າບໍລິການ ຕາມ ລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ຕາມກຳນົດເວລາ ຢ່າງເປັນປົກກະຕິ ແລະ ຖືກຕ້ອງ.

**ມາດຕາ 34 ການເກັບຄ່າທຳນຽມ ແລະ ຄ່າບໍລິການ**

ພະນັກງານການເງິນ ເກັບຄ່າທຳນຽມ ແລະ ຄ່າບໍລິການ ທຸລະກິດບໍລິການສົ່ງເສີມສຸຂະພາບ ໃນຂອບເຂດທົ່ວປະເທດ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການເງິນເປັນລາຍລັກອັກສອນ. ການເກັບ ຕ້ອງຈົດຮັບ, ຈົດຈ່າຍ ພ້ອມທັງອອກໃບເກັບເງິນ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ຜູ້ຈ່າຍເງິນ ຕ້ອງທວງເອົາໃບເກັບເງິນ ຫຼື ໃບບິນຮັບເງິນຂອງຂະແໜງການເງິນ ຢ່າງຖືກຕ້ອງ ເພື່ອເປັນຫຼັກຖານຢັ້ງຢືນການຈ່າຍ.

## ໝວດທີ 10
## ການຄຸ້ມຄອງ ແລະ ການຕິດຕາມກວດກາ

**ມາດຕາ 35 ການຄຸ້ມຄອງ ແລະ ການຕິດຕາມກວດກາ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮັບຜິດຊອບໂດຍກົງໃນການຄຸ້ມຄອງ ແລະ ຕິດຕາມກວດກາ ວຽກງານທຸລະກິດບໍລິການສົ່ງເສີມສຸຂະພາບ ຢ່າງລວມສູນ ແລະ ເປັນເອກະພາບທົ່ວປະເທດ ໂດຍມອບໃຫ້ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ອົງການອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດໃຫ້ມີປະສິທິພາບ ແລະ ປະສິດທິຜົນ.

**ມາດຕາ 36 ອົງການຄຸ້ມຄອງ**

ອົງການຄຸ້ມຄອງວຽກງານທຸລະກິດບໍລິການສົ່ງເສີມສຸຂະພາບ ປະກອບດ້ວຍ:

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
2. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ນະຄອນຫຼວງ;
3. ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ເທດສະບານ, ນະຄອນ.

**ມາດຕາ 37 ສິດ ແລະ ໜ້າທີ່ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານທຸລະກິດບໍລິການສົ່ງເສີມສຸຂະພາບ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານທ່ອງທ່ຽວ ໃຫ້ເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານທຸລະກິດບໍລິການສົ່ງເສີມສຸຂະພາບ ໃນຂອບເຂດທົ່ວປະເທດ;

4. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ກຳນົດແຜນພັດທະນາ ແລະ ໂຄສະນາສົ່ງເສີມ ວຽກງານທຸລະກິດບໍລິການສົ່ງເສີມສຸຂະພາບໃນຂອບເຂດທົ່ວປະເທດ;

5. ກຳນົດມາດຕະຖານ, ນຳພາ, ຊີ້ນຳ ການຈັດລະດັບ ວຽກງານທຸລະກິດບໍລິການສົ່ງເສີມສຸຂະພາບ ເພື່ອເຮັດໃຫ້ການດຳເນີນທຸລະກິດ ມີຄຸນນະພາບ, ໄດ້ມາດຕະຖານ ແລະ ຖືກຕ້ອງຕາມກົດໝາຍ;

6. ຊີ້ນຳ, ຊຸກຍູ້ ແລະ ຕິດຕາມ ການປະຕິບັດນະໂຍບາຍ, ແຜນການ, ໂຄງການ, ກົດໝາຍ ກ່ຽວກັບວຽກງານທຸລະກິດບໍລິການສົ່ງເສີມສຸຂະພາບ ໃນຂອບເຂດທົ່ວປະເທດ

7. ຈັດຕັ້ງ ແລະ ສົ່ງເສີມ ການບຳລຸງສ້າງ, ຍົກລະດັບ, ຝຶກອົບຮົມ ບຸກຄະລາກອນ ທີ່ເຄື່ອນໄຫວວຽກງານທຸລະກິດບໍລິການສົ່ງເສີມສຸຂະພາບ;

8. ປັບປຸງລະບົບການຈັດຕັ້ງຂອງວຽກງານທຸລະກິດບໍລິການສົ່ງເສີມສຸຂະພາບໃຫ້ມີຄວາມໜັກແໜ້ນ ຄຸ້ມຄອງ ແລະ ນຳໃຊ້ພະນັກງານ-ລັດຖະກອນ ໂດຍຮັບປະກັນດ້ານປະລິມານ, ຄຸນນະພາບ ແລະ ປະສິດທິຜົນ;

9. ຄົ້ນຄວ້າ, ພິຈາລະນາ, ອະນຸມັດການດຳເນີນທຸລະກິດ ແລະ ການອະນຸຍາດສືບຕໍ່ດຳເນີນທຸລະກິດບໍລິການສົ່ງເສີມສຸຂະພາບແຕ່ລະປະເພດ ທີ່ມີທຶນຈົດທະບຽນຕັ້ງແຕ່ ຫ້າຮ້ອຍ ລ້ານກີບຂຶ້ນໄປ;

10. ຄົ້ນຄວ້າ ພິຈາລະນາ ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ໂດຍມີການປະສານສົມທົບກັບພາກສ່ວນອື່ນ ທີ່ກ່ຽວຂ້ອງ;

11. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີກ່ຽວກັບວຽກງານທຸລະກິດບໍລິການສົ່ງເສີມສຸຂະພາບຕາມກົດໝາຍ;

12. ພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ;

13. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດໜ້າທີ່ ກ່ຽວກັບວຽກງານທຸລະກິດບໍລິການສົ່ງເສີມສຸຂະພາບ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 38 ສິດ ແລະ ໜ້າທີ່ ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ**

1. ຈັດຕັ້ງ, ຜັນຂະຫຍາຍ, ໂຄສະນາ, ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການດຳເນີນທຸລກິດບໍລິການສົ່ງເສີມສຸຂະພາບ;

2. ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງທຸລະກິດບໍລິການສົ່ງເສີມສຸຂະພາບ;

3. ເປັນເຈົ້າການປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ແກ້ໄຂ ປະກົດການຫຍໍ້ທໍ້ໃນທຸລະກິດບໍລິການສົ່ງເສີມສຸຂະພາບ ໃນທ້ອງຖິ່ນຂອງຕົນ;

4. ຄົ້ນຄວ້າ, ພິຈາລະນາ, ອະນຸມັດການດຳເນີນທຸລະກິດ ແລະ ອະນຸຍາດການສືບຕໍ່ດຳເນີນທຸລະກິດແຕ່ລະປະເພດ ທີ່ມີທຶນຈົດທະບຽນສູງກວ່າ ສາມຮ້ອຍ ລ້ານກີບ ຂຶ້ນໄປ ແລະ ຕ່ຳກວ່າ ຫ້າຮ້ອຍ ລ້ານກີບລົງມາ;

5. ຄົ້ນຄວ້າ ພິຈາລະນາ ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ໂດຍມີການປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ;

6. ອຳນວຍຄວາມສະດວກ ໃນການດຳເນີນທຸລະກິດຂອງຜູ້ລົງທຶນ ໃຫ້ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ;

7. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຕາມການມອບໝາຍຂອງຂັ້ນເທິງ;

8. ຝຶກອົບຮົມ, ສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານຄຸ້ມຄອງທຸລະກິດບໍລິການສົ່ງເສີມສຸຂະພາບ;

9. ສະຫຼຸບ ແລະ ລາຍງານກ່ຽວກັບວຽກງານຄຸ້ມຄອງທຸລະກິດບໍລິການສົ່ງເສີມສຸຂະພາບ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

10. ເກັບກຳສະຖິຕິຫົວໜ່ວຍທຸລະກິດບໍລິການສົ່ງເສີມສຸຂະພາບ ທີ່ຢູ່ພາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນ. ໃນກໍລະນີ ຈຳເປັນ ແລະ ຮີບດ່ວນ ຕ້ອງລາຍງານຢ່າງທັນການ;

11. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືທີ່ດີ ຕໍ່ການຈັດຕັ້ງ, ເຈົ້າໜ້າທີ່ກ່ຽວຂ້ອງ ແລະ ຂັ້ນເທິງຂອງຕົນ;

12. ຊີ້ນຳ ນຳພາ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 39 ສິດ ແລະ ໜ້າທີ່ ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ**

1. ຈັດຕັ້ງປະຕິບັດ, ໂຄສະນາ, ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານທຸລກິດບໍລິການສົ່ງເສີມສຸຂະພາບ;

2. ເປັນເຈົ້າການປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ແກ້ໄຂ ປະກົດການຫຍໍ້ທໍ້ໃນທຸລະກິດບໍລິການສົ່ງເສີມສຸຂະພາບ ໃນທ້ອງຖິ່ນຂອງຕົນ;

3. ຄົ້ນຄວ້າ, ພິຈາລະນາ, ອະນຸມັດການດຳເນີນທຸລະກິດ ແລະ ອະນຸຍາດການສືບຕໍ່ດຳເນີນທຸລະກິດແຕ່ລະປະເພດ ທີ່ມີທຶນຈົດທະບຽນ ສອງຮ້ອຍ ລ້ານກີບ ຂຶ້ນໄປ ແລະ ຕໍ່າກວ່າ ສາມຮ້ອຍ ລ້ານກີບ ລົງມາ;

4. ຄົ້ນຄວ້າ ພິຈາລະນາ ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ໂດຍມີການປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ;

5. ອຳນວຍຄວາມສະດວກ ໃນການດຳເນີນທຸລະກິດຂອງຜູ້ລົງທຶນ ໃຫ້ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ;

6. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຕາມການມອບໝາຍຂອງຂັ້ນເທິງ;

7. ຝຶກອົບຮົມ, ສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານຄຸ້ມຄອງທຸລະກິດບໍລິການສິ່ງເສີມສຸຂະພາບ;

8. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານຄຸ້ມຄອງທຸລະກິດບໍລິການສິ່ງເສີມສຸຂະພາບ ຕໍ່ຂັ້ນເທິງຕົນ ຢ່າງເປັນປົກກະຕິ;

9. ເກັບກຳສະຖິຕິຫົວໜ່ວຍທຸລະກິດບໍລິການສິ່ງເສີມສຸຂະພາບ ທີ່ຢູ່ພາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນ. ໃນກໍລະນີ ຈຳເປັນ ແລະ ຮີບດ່ວນ ຕ້ອງລາຍງານຢ່າງທັນການ;

10. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືທີ່ດີ ຕໍ່ການຈັດຕັ້ງ, ເຈົ້າໜ້າທີ່ກ່ຽວຂ້ອງ ແລະ ຂັ້ນເທິງຂອງຕົນ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 40 ເນື້ອໃນການກວດກາ**

ເນື້ອໃນການກວດກາ ມີດັ່ງນີ້:

1. ການປະຕິບັດນະໂຍບາຍ, ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານທຸລະກິດບໍລິການສິ່ງເສີມສຸຂະພາບ;

2. ການດຳເນີນທຸລະກິດ ເປັນຕົ້ນ ກວດກາເອກະສານ ແລະ ລົງກວດກາການ ເຄື່ອນໄຫວຕົວຈິງຢູ່ກັບທີ່;

3. ການແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານທຸລະກິດບໍລິການສິ່ງເສີມສຸຂະພາບ;

4. ການປະຕິບັດມາດຕະການຕ່າງໆ ຕໍ່ພາກສ່ວນທີ່ກ່ຽວຂ້ອງ ໃສ່ຜູ້ລະເມີດກົດໝາຍ ກ່ຽວກັບວຽກງານທ່ອງທ່ຽວ ໂດຍມີການປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ;

5. ເນື້ອໃນອື່ນທີ່ເຫັນວ່າຈຳເປັນ.

**ມາດຕາ 41 ຮູບການກວດກາ**

ຮູບການການກວດກາ ແບ່ງອອກເປັນ ສາມ ປະເພດ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດກາ ເມື່ອເຫັນວ່າມີຄວາມຈໍາເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາ ຮູ້ລ່ວງໜ້າຢ່າງໜ້ອຍ ຊາວສີ່ຊົ່ວໂມງ;

3. ການກວດກາ ແບບກະທັນຫັນ ຊຶ່ງແມ່ນການກວດກາ ແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດໍາເນີນການກວດກາ ໃຫ້ຈັດຕັ້ງພາຍຫຼັງຫົວໜ່ວຍທຸລະກິດເລີ່ມດໍາເນີນທຸລະກິດ ເປັນຕົ້ນໄປ ແລະ ການກວດກາ ຕ້ອງປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 11
## ຂໍ້ຫ້າມ

### ມາດຕາ 42 ຂໍ້ຫ້າມສໍາລັບຜູ້ໃຊ້ບໍລິການ

ຂໍ້ຫ້າມສໍາລັບຜູ້ໃຊ້ບໍລິການສົ່ງເສີມສຸຂະພາບ ມີດັ່ງນີ້:

1. ນໍາໃຊ້ສະຖານທີ່ບໍລິການເປັນບ່ອນຄ້າຂາຍ, ຈໍາໜ່າຍ, ເສບ, ມົ້ວສຸມສິ່ງເສບຕິດ, ການພະນັນ, ໂສເພນີ, ຄ້າມະນຸດ ແລະ ອາວຸດທຸກຊະນິດ;

2. ມີອາວຸດ, ສິ່ງເສບຕິດ, ວັດຖຸເຄມີເບື່ອເມົາ ແລະ ສິ່ງທີ່ເປັນອັນຕະລາຍທຸກຊະນິດ ທີ່ສົ່ງຜົນຕໍ່ຊີວິດ, ສຸຂະພາບຮ່າງກາຍ, ຈິດ ແລະ ປະສາດຂອງມະນຸດ;

3. ພຶດຕິກໍາ ແລະ ການເຄື່ອນໄຫວທີ່ສົ່ງຜົນກະທົບດ້ານລົບຕໍ່ຄວາມສະຫງົບ, ປອດໄພ, ເສດຖະກິດ, ວັດທະນະທໍາ-ສັງຄົມ ແລະ ສິ່ງແວດລ້ອມ;

4. ກໍ່ຄວາມວຸ້ນວາຍ, ອາລະວາດຕີກັນ ຫຼື ທໍາຮ້າຍຮ່າງກາຍ;

5. ຂັດຂືນ, ຝ່າຝືນ, ຕໍ່ຕ້ານ ຫຼື ປະຕິເສດຄໍາສັ່ງຂອງເຈົ້າໜ້າທີ່;

6. ພຶດຕິກໍາອື່ນທີ່ຂັດກັບກົດໝາຍ ແລະ ລະບຽບການ.

### ມາດຕາ 43 ຂໍ້ຫ້າມສໍາລັບຫົວໜ່ວຍທຸລະກິດ

ຂໍ້ຫ້າມສໍາລັບຫົວໜ່ວຍທຸລະກິດບໍລິການສົ່ງເສີມສຸຂະພາບ ມີດັ່ງນີ້:

1. ດໍາເນີນທຸລະກິດ ແລະ ໃຫ້ບໍລິການໂດຍບໍ່ໄດ້ຮັບອະນຸຍາດ;

2. ບໍລິການດ້ານອື່ນນອກຈາກທຸລະກິດບໍລິການສົ່ງເສີມສຸຂະພາບໂດຍບໍ່ແຈ້ງຕໍ່ການຈັດຕັ້ງ;

3. ໂຄສະນາ ໂອ້ອວດ ການບໍລິການ, ສັບພະຄຸນ, ຜະລິດຕະພັນ, ເຄື່ອງມື ຫຼື ສ່ວນປະກອບຕ່າງໆ ເກີນຄວາມເປັນຈິງ;

4. ນໍາໃຊ້ສະຖານທີ່ບໍລິການເປັນບ່ອນຄ້າຂາຍ, ເສບ, ມົ້ວສຸມສິ່ງເສບຕິດ, ການພະນັນ, ໂສເພນີ, ຄ້າມະນຸດ ແລະ ອາວຸດທຸກຊະນິດ;

5. ມີອາວຸດ, ສິ່ງເສບຕິດ, ວັດຖຸເຄມີເບື່ອເມົາ ແລະ ສິ່ງທີ່ເປັນອັນຕະລາຍທຸກຊະນິດ ທີ່ມີຜົນຕໍ່ຊີວິດ, ສຸຂະພາບ, ຮ່າງກາຍ, ຈິດ ແລະ ປະສາດຂອງມະນຸດ;

6. ຈຳໜ່າຍຢາສູບ, ເຫຼົ້າ, ເບຍ ຫຼື ສິ່ງມຶນເມົາທຸກຊະນິດ;

7. ພຶດຕິກຳ ແລະ ການເຄື່ອນໄຫວທີ່ສົ່ງຜົນກະທົບດ້ານລົບຕໍ່ຄວາມສະຫງົບ, ຄວາມປອດໄພ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ສິ່ງແວດລ້ອມ;

8. ກໍ່ຄວາມວຸ້ນວາຍ, ອາລະວາດຕີກັນ ຫຼື ທຳຮ້າຍຮ່າງກາຍ;

9. ຊັກຈູງ, ຊີ້ນຳ ນຳພາ, ຕົວະຍົວະຫຼອກລວງ, ບັງຄັບນາບຂູ່, ຊຸກຍູ້ສົ່ງເສີມບຸກຄົນ ຫຼື ພະນັກງານເຄື່ອນໄຫວ, ໃຊ້ພຶດຕິກຳ ບໍລິການທາງເພດ ຫຼື ຝ່າຝືນກົດໝາຍ ແລະ ລະບຽບການ;

10. ຂັດຂືນ, ຝ່າຝືນ, ຕໍ່ຕ້ານ ຫຼື ປະຕິເສດຄຳສັ່ງຂອງເຈົ້າໜ້າທີ່ ຫຼື ການຈັດຕັ້ງທີ່ຕົນຂຶ້ນກັບ;

11. ພຶດຕິກຳອື່ນທີ່ຂັດກັບກົດໝາຍ ແລະ ລະບຽບການ.

### ມາດຕາ 44 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ຂອງລັດ

ຂໍ້ຫ້າມສຳລັບຜູ້ພະນັກງານ ແລະ ເຈົ້າໜ້າທີ່ຂອງລັດ ມີດັ່ງນີ້:

1. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຮຽກຮ້ອງ ຫຼື ສະແຫວງຫາຜົນປະໂຫຍດໃນຮູບແບບຕ່າງໆ;
2. ມີສ່ວນກ່ຽວພັນກັບສິ່ງເສບຕິດ, ໂສເພນີ ແລະ ສິ່ງຜິດກົດໝາຍ;
3. ມີສ່ວນຮ່ວມ ຫຼື ສ່ວນໄດ້-ເສຍ ໂດຍກົງ ຫຼື ທາງອ້ອມ ທີ່ຕິດພັນກັບທຸລະກິດສົ່ງເສີມສຸຂະພາບ;
4. ກົດໜ່ວງ, ຖ່ວງດຶງ, ແກ່ຍາວເວລາໃນການອອກອະນຸຍາດດຳເນີນທຸລະກິດ ຫຼື ລະເວັ້ນ, ເມີນເສີຍຕໍ່ການປະຕິບັດໜ້າທີ່ໃນການແກ້ໄຂບັນຫາໃນຄວາມຮັບຜິດຊອບຂອງຕົນ;
5. ມີພຶດຕິກຳ, ການກະທຳ ແລະ ການເຄື່ອນໄຫວທີ່ມີຜົນກະທົບດ້ານລົບຕໍ່ເສດຖະກິດ, ການເມືອງ, ວັດທະນະທຳ - ສັງຄົມ, ສິ່ງແວດລ້ອມ ແລະ ອື່ນໆ;
6. ມີພຶດຕິກຳອື່ນທີ່ຂັດກັບກົດໝາຍ ແລະ ລະບຽບການ.

## ໝວດທີ 12
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 45 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍ, ລະບຽບການ ແລະ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 46 ມາດຕະການຕໍ່ກັບຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກດຳເນີນຄະດີອາຍາ ແລ້ວແຕ່ກໍລະນີ ໜັກ ຫຼື ເບົາ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 47 ມາດຕະການສຶກສາອົບຮົມ ແລະ ກ່າວເຕືອນ**

ໃນກໍລະນີ ເປັນການກະທຳຜິດຄັ້ງທີ່ໜຶ່ງ ແລະ ເປັນໂທດສະຖານເບົາ ທີ່ບໍ່ມີຄວາມເສຍຫາຍ ຫຼື ບາດເຈັບ, ເປັນອັນຕະລາຍ ຈະຖືກສຶກສາອົບຮົມ, ກ່າວເຕືອນ ພ້ອມທັງແຈ້ງເຫດຜົນ ແລະ ການກະທຳຜິດໃຫ້ຮັບຊາບ ແລະ ລົງບັນທຶກໄວ້ເປັນຫຼັກຖານ.

**ມາດຕາ 48 ມາດຕະການປັບໃໝ ແລະ ໃຊ້ແທນຄ່າເສຍຫາຍ**

ໃນກໍລະນີ ຫົວໜ່ວຍທຸລະກິດໄດ້ລະເມີດຂໍ້ຫ້າມ ທີ່ ກໍ່ໃຫ້ເກີດຄວາມເສຍຫາຍ ແລະ ບາດເຈັບ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ຄັ້ງທີໜຶ່ງ: ສຶກສາອົບຮົມ, ລົງບັນທຶກ, ປັບໃໝບໍ່ເກີນ ສາມ ລ້ານກີບ ແລະ ໃຊ້ແທນຄ່າເສຍຫາຍທັງໝົດ;
2. ຄັ້ງທີສອງ: ສຶກສາອົບຮົມ, ລົງບັນທຶກ, ປັບໃໝບໍ່ເກີນ ຫ້າ ລ້ານກີບ ພ້ອມໃຊ້ແທນຄ່າເສຍຫາຍ ທັງໝົດ ແລະ ໂຈະການດຳເນີນທຸລະກິດຊົ່ວຄາວ ຫົກ ເດືອນ;
3. ຄັ້ງທີສາມ: ສຶກສາອົບຮົມ, ລົງບັນທຶກ, ປັບໃໝບໍ່ເກີນ ສິບ ລ້ານກີບ ພ້ອມໃຊ້ແທນຄ່າເສຍຫາຍທັງໝົດ ພ້ອມທັງ ຖອນໃບອະນຸຍາດດຳເນີນທຸລະກິດຖາວອນ ແລະ ດຳເນີນຄະດີຕາມກົດໝາຍ.

## ໝວດທີ 13
## ບົດບັນຍັດສຸດທ້າຍ

**ມາດຕາ 49 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 50 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີ**

ສວນສະຫວັນ ວິຍະເກດ